## ຕົວຢ່າງຂໍ້ຄວາມແຈ້ງເຕືອນ ແລະ ຂໍ້ຄວາມເຕືອນ

ທາງລຸ່ມນີ້ ແມ່ນຂໍ້ຄວາມຕົວຢ່າງ ເພື່ອເຕືອນໃຫ້ໜ່ວຍງານໃຊ້ເປັນແນວທາງໃນການຮ່າງຂໍ້ຄວາມສະເພາະທີ່ກ່ຽວຂ້ອງຕໍ່ເຫດການສຸກເສີນໃນທ້ອງຖິ່ນ. ຕົວຢ່າງເຫລົ່ານີ້ບໍ່ຄົບຖ້ວນສົມບູນ. ຂໍ້ຄວາມສຸດທ້າຍ ຄວນໄດ້ຮັບການດັດແປງ ເພື່ອໃຫ້ເໝາະສົມກັບຄວາມຕ້ອງການສະເພາະຂອງເຫດການທີ່ບໍ່ຄືເຫດການໃດໆທີ່ຮີບດ່ວນ.

### ຂໍ້ຄວາມຕົວຢ່າງການຍົກຍ້າຍ

ຂໍ້ຄວາມຍາວ

• ນີ້ຄື [Agency] ພ້ອມຄຳສັ່ງການບັງຄັບໃຫ້ຍົກຍ້າຍໃຫ້ໄປທີ່ [location]. ຈົ່ງເຮັດຕາມເພື່ອເປັນການປ້ອງກັນ ແລະ ໃຫ້ອອກໄປໂດຍທັນທີ; 1. ຮອບຮອມສະມາຊິກທັງໝົດ. 2. ຮອບຮອມສັດລ້ຽງທັງໝົດ. 3. ເອົາແຕ່ສິ່ງຂອງທີ່ຈຳເປັນເທົ່ານັ້ນໄປນຳ. 4. ຢ່າລືມເອົາຢາທີ່ຈຳເປັນຕິດຕົວໄປນຳ. 5. ປິດເຄື່ອງໃຊ້ໄຟຟ້າ ແລະ ໄຟ ໃນບ້ານເຮືອນຂອງທ່ານ 6. ລັອກເຮືອນຂອງທ່ານ. ເສັ້ນທາງການຍົກຍ້າຍຄື: [Evacuation Route]. ສູນກາງການຍົກຍ້າຍເປີດຢູ່ທີ່ [Name and Location of Evacuation Center]. ສຳລັບຂໍ້ມູນເພີ່ມເຕີມ ກະລຸນາເປີດຟັງສະຖານີວິທະຍຸ ແລະ ຊ່ອງໂທລະທັດທາງທ້ອງຖິ່ນ, ທີ່ **[url]**, ຫລື ໂທ **[###-###-####]**.

• [Agency] ອອກຄຳສັ່ງບັງຄັບໃຫ້ຍົກຍ້າຍໄປທີ່ [location]. ກົມອຸຕຸນິຍົມ ວິທະຍາແຫ່ງຊາດໄດ້ອອກຄຳເຕືອນໄພນ້ຳຖ້ວມສຳລັບ[location]. ຜູ້ອາໄສໃນທ້ອງຖິ່ນທີ່ຖືກກະທົບຕ້ອງຍົກຍ້າຍໂດຍທັນທີ ສູນກາງການຍົກຍ້າຍ/ສູນພັກອາໄສເປີດໃຫ້ບໍລິການ ທີ່ [location]. ສຳລັບຂໍ້ມູນເພີ່ມເຕີມ ໄປທີ່ [insert resource]. ກະລຸນາຟັງ [radio station] ເພື່ອຕິດຕາມຄວາມຄືບໜ້າ.

ຂໍ້ຄວາມສັ້ນໆ

• ຄຳສັ່ງຍົກຍ້າຍ ເພາະການຄຸກຄາມຈາກໄຟປ່າ ໃຫ້ໄປທີ່ [location]-ໃຫ້ອອກໄປດຽວນີ້- ລາຍລະອຽດເວັບໄຊ້ຂອງ [Agency]

### ຂໍ້ຄວາມຕົວຢ່າງຂອງການຫລົບໄພຢູ່ກັບບ່ອນ

ຂໍ້ຄວາມຍາວ

• ນີ້ແມ່ນ [Agency] ລາຍງານຄຳສັ່ງບັງຄັບໃຫ້ຫລົບໄພກັບບ່ອນ ສຳລັບຜູ້ອາໄຍ [location] ເພາະມີສານອັນຕະລາຍທີ່ກະຈາຍອອກມາ. ຈົ່ງປົກປ້ອງຕົວເອງທັນທີTake: 1. ພ້າວເຂົ້າໄປຂ້າງໃນໂດຍທັນທີ ແລະ ພັກຢູ່ໃນເຮືອນ ຫລືອາຄານນັ້ນ. 2. ນຳສັດລ້ຽງເຂົ້າມາຂ້າງໃນທັນທີ ຖ້າເຮັດຢ່າງຮີບດ່ວນໄດ້. 3. ປິດປ່ອງຢ້ຽມ ແລະ ປະຕູທັງໝົດ. 4. ປິດອາຍເຢັນ ແລະ ລະບົບສົ່ງຄວາມຮ້ອນ. 5. ປິດ fireplace dampers( ລີ້ນກັນໄຟຂອງເຕົາໄຟຜີງໃນບ້ານເຮືອນ). 6. ຫາ ວິທະຍຸ, ໄຟສາຍ, ອາຫານ, ນ້ຳ ແລະ ຢາຕ່າງໆໃຫ້ພ້ອມ. 7. ໂທ911 ສະເພາະໃນກໍລະນີສຸກເສີນແທ້ໆເທົ່ານັ້ນ.

ທ່ານຈະໄດ້ຮັບການແຈ້ງບອກ ເມື່ອເຫດການອັນຕະລາຍໄດ້ຜ່ານພົ້ນໄປແລ້ວ ວ່າປອດໄພທີ່ທ່ານຈະອອກໄປຂ້າງນອກ ແລະເຮັດສິ່ງຕ່າງໆໄດ້ຕາມປົກກະຕິແລ້ວ. ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຟັງວິທະຍຸ ແລະ ເບິ່ງໂທລະທັດທ້ອງຖິ່ນ, ໄປທີ່ **[url]**, ຫລື ໂທ **[###-###-####]**.

• ພະແນກດັບເພີງ ຂໍຮ້ອງໃຫ້ທຸກຄົນທີ່ຢູ່ພາຍໃນລັດສະໝີ ½ ໄມ ຂອງ [location] ໃຫ້ເຂົ້າໄປຂ້າງໃນ ແລະ ຢູ່ຂ້າງໃນ, ຈົ່ງປິດປ່ອງຢ້ຽມ, ປິດອາຍເຢັນ, ແລະ ເອົາສັດລ້ຽງເຂົ້າມາຂ້າງໃນ. ຂໍ້ມູນເພີ່ມເຕີມທີ່ຈະຕິດຕາມ. **[link]**

ຂໍ້ຄວາມສັ້ນໆ

• ສານເຄມີອັນຕະລາຍທີ່ກະຈັດກະຈາຍອອກໄປ. ທັງໝົດພາຍໃນລັດສະໝີ ½ ໄມລ ຂອງ [location]. ຈົ່ງເຂົ້າໄປທາງໃນ. ແລ້ວຢູ່ຂ້າງໃນ. ຄອຍຕິດຕາມຄວາມຄືບໜ້າ.

## ຂໍ້ຄວາມຕົວຢ່າງການຮັບຮູ້ສະພາບອາກາດ

ຂໍ້ຄວາມຍາວ

• ນີ້ແມ່ນ [Agency] ລາຍງານຄໍາສັ່ງການບັງຄັບໃຫ້ຍົກຍ້າຍໄປ [location] ເນື່ອງຈາກອາດມີນໍ້າຖ້ວມ. ຈົ່ງປົກປ້ອງຕົວເອງ ແລະ ອອກຈາກບ່ອນນີ້ທັນທີ: 1. ຮວມຮວມສະມາຊິກຄອບຄົວ ຫລື ຄົນອື່ນໆ . 2. ຮວບຮວມສັດລ້ຽງທັງໝົດ 3. ຮວບຮວມເອົາແຕ່ສິ່ງຈໍາເປັນເທົ່ານັ້ນ. 4. ຢ່າລືມເອົາຢາທີ່ຈໍາເປັນຕິດຕົວມານໍາ. 5. ປິດເຄື່ອງໃຊ້ໄຟຟ້າ ແລະ ໄຟ ໃນບ້ານເຮືອນຂອງທ່ານ . 6. ລັອກບ້ານເຮືອນຂອງທ່ານ. ເສັ້ນທາງຍົກຍ້າຍຄື: [Evacuation Route]. ສູນກາງການຍົກຍ້າຍເປີດບໍລິການຢູ່ທີ່ [Name and Location of Evacuation Center]. ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຟັງວິທະຍຸ ແລະ ເບິ່ງໂທລະທັດທ້ອງຖິ່ນ, ໄປທີ່ **[url]**, ຫລື ໂທ **[###-###-####]**.

• ກົມອຸຕຸນິຍົມວິທະຍາແຫ່ງຊາດ ໄດ້ພະຍາກອນວ່າຈະມີນໍ້າຖ້ວມຢູ່ [location] ພາຍໃນ 24 ຊົ່ວໂມງ ຂ້າງໜ້າ. ຕໍາຫລວດກໍາລັງໃຫ້ຄໍາແນະນໍາແກ່ຜູ້ອາໄສຊີ່ງຢູ່ໃນຂົງເຂດນີ້ໃຫ້ຕຽມພ້ອມຍົກຍ້າຍໃນທຸກເວລາ. ຂໍ້ມູນສໍາລັບການຕຽມພ້ອມແມ່ນຢູ່here. ຄອຍຕິດຄວາມຄືບໜ້າ ທີ່ພວກເຮົາຈະແຈ້ງໃຫ້ຊາບເລື້ອຍໆ.

ຂໍ້ຄວາມສັ້ນໆ

• ຄໍາເຕືອນສະຖານທີ່ນໍ້າຖ້ວມ ທີ່ [location] ທີ່ຄວນຫລີກລ້ຽງ. ຢ່າໄປຕໍ່ ຢ່າຈົມນໍ້າ. ຄອຍຕິດຕາມຄວາມຄືບໜ້າ.

## ຂໍ້ຄວາມກ່ຽວກັບມືປືນທີ່ກໍາລັງບຸກຍິງຢູ່

ຂໍ້ຄວາມຍາວ

• ນີ້ແມ່ນ [Law Enforcement Agency] ລາຍງານວ່າມີມືປືນທີ່ກໍາລັງບຸກຍິງຢູ່ໃກ້[ສະຖານທີ່]. ຈົ່ງຫລີກລ້ຽງເຂດນີ້. ຖ້າທ່ານຢູ່ໃກ້ [location], ໃຫ້ເຂົ້າໄປຂ້າງໃນ, ຢູ່ຂ້າງໃນ, ແລະ ເຮັດຕາມມາດຕະການປົກປ້ອງດັ່ງຕໍ່ໄປນີ້: 1. ເຂົ້າໄປ

ທາງໃນ ແລະ ຢູ່ໃນບ່ອນອາໄສຂອງທ່ານທັນທີ. 2. ນໍາສັດລ້ຽງເຂົ້າມາຂ້າງໃນ ຖ້າເຮັດໄດ້ທັນທີ. 3. ອັດປ່ອງຢ້ຽມ ແລະ ປະຕູທັງໝົດ. 4. ໂທ 911 ທັນທີ ເມື່ອມີເຫດສຸກເສີນແຫ່ງ ຫລື ໄດ້ຍິນ ຫລື ເຫັນວ່າມີເຫດການສົງໄສໃດໆໃນເຂດ ຫລື ໃກ້ສະຖານທີ່ຂອງທ່ານ. ທ່ານຈະໄດ້ຮັບການແຈ້ງບອກວ່າ ເມື່ອໃດທ່ານພົ້ນໄພອັນຕະລາຍແລ້ວ. ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຟັງວິທະຍຸ ແລະ ເບິ່ງໂທລະທັດທ້ອງຖິ່ນ, ໄປທີ່ **[url]**, ຫລື ໂທ **[###-###-####]**.

• ຕັ້ງແຕ່ເວລາ 11 ຕອນເຊົ້າ, ຕໍາຫລວດແນະນໍາໃຫ້ປະຊາຊົນຫລີກລ້ຽງພື້ນທີ່ [insert location]. ຕໍາຫລວດກໍາລັງຈັດການຮັບມືກັບມືປືນທີ່ກໍາລັງບຸກຍິງຢູ່. ສໍາລັບຜູ້ທີ່ຢູ່ໃກ້ແຖວນັ້ນ ທ່ານຄວນຫາບ່ອນຫລົບ ແລະ ປິດໂທລະສັບຂອງຕົນໄວ້. ຖ້າທ່ານປະເຊີນໜ້າກັບມືປືນ, ໃຫ້ທ່ານ ແລ່ນ, ລີ້, ຕໍ່ສູ້. ກະລຸນາໄປທີ່ **[link]** ສໍາລັບຂໍ້ມູນເພີ່ມເຕີມ ແລະ ຄອຍຕິດຕາມສໍາລັບຄໍາແນະນໍາເພີ່ມເຕີມ.

ຂໍ້ຄວາມສັ້ນໆ

• ຖ້າມີມືປືນທີ່ກໍາລັງບຸກຍິງຢູ່ ຢູ່ທີ່ [location]. ຈົ່ງຫລີກລ້ຽງພື້ນທີ່ ຫລື ແລ່ນ, ລີ້, ຕໍ່ສູ້. ຄອຍຕິດຕາມສໍາລັບຄວາມຄືບໜ້າ.